**ໂຄງຮ່າງຂອງບົດເລື່ອງ**

**ຊື່ຂອງເລື່ອງ: ການປຸງແຕ່ງກາເຟເພື່ອສ້າງມູນຄ່າເພີ່ມໃນສູນ ບ. ປຽງ, ເຂດແກ່ວແສດ**

**ຄວາມເປັນມາ**

ໃນຊຸມ ໄດ້ມີພະນັກງານແຂວງວຽງເອົາເບ້ຍກາເຟມາໃຫ້ບ້ານຕົນໃຕ້ ແລະ ປະຊາຊົນບ້ານປຽງຈຳນວນໜຶ່ງໄດ້ຂໍນຳເຂົາເຈົ້າມາປູກ. ເມື່ອຊາວສວນປູກໄດ້ປະມານຫລາຍສົມຄວນ ພັດບໍ່ມີຕະຫລາດເກັບຊື້. ສາຍເຫດແມ່ນເນື່ອງມາຈາກ:

1. ການປູກກາເຟເມື່ອກ່ອນແມ່ນເຮັດພໍໃຜພໍລາວ ຕາມທຳມະຊາດບໍ່ຮູ້ເຕັກນິກທີ່ຖືກຕ້ອງ ເຮັດໃຫ້ກາເຟຍັງບໍ່ມີຄຸນນະພາບ ພ້ອມກັນນັ້ນປະລິມານຜົນຜະລິດກໍ່ຍັງໜ້ອຍ ບໍ່ກຸ້ມຄ່າທີ່ຜູ້ເກັບຊື້ຈະມາຊື້ເປັນປະຈຳຢູ່ບ້ານ
2. ການຂາຍແມ່ນຂາຍເປັນກາເຟໝາກແດງພົບຄວາມຫຍຸ້ງຍາກໃນການປະສານງານກັບຜູ້ຊື້ ມື້ໃດຜູ້ຊື້ບໍ່ມາກໍ່ບໍ່ໄດ້ເກັບຂາຍ ເຮັດໃຫ້ກາເຟ ບໍ່ໄດ້ຂາຍ ຄ້າງຢູ່ກົກ ພາໃຫ້ເກີດພະຍາດ ແລະ ແມງໄມ້ໃນລະດູການຖັດໄປ

**ບົດຮຽນ**

- ມີສ້າງໂຄງຮ່າງການຈັດຕັ້ງ ແລະ ແບ່ງຄວາມຮັບຜິດຊອບພາຍໃນຄະນະຊີ້ນຳລວມທັງສະມາຊິກຢ່າງລະອຽດ (ໜ້າວຽກຫລັກແມ່ນການກວດກາຄຸນນະພາບ ແລະ ການຄຸ້ມຄອງການເງິນກຸ່ມ)
- ມີລະບຽບກຸ່ມຢ່າງລະອຽດ
- ມີຄູຝຶກທີ່ມີຄວາມຊ່ຽວຊານດ້ານກາເຟ ແລະ ມີໂອກາດໄປແລກປ່ຽນນຳກຸ່ມຜະລິດກາເຟທີ່ປະສົບຜົນສຳເລັດມາແລ້ວ

*(ຈົ່ງອະທິບາຍລາຍລະອຽດຂອງບົດຮຽນໃນການແກ້ໄຂບັນຫາດັ່ງກ່າວ)*

**ຜົນໄດ້ຮັບ**

- ມີສວນກາຊຸມຊົນ ແລະ ມີເບ້ຍກາເຟພຽງພໍສຳລັບສະມາຊິກທີ່ຈະນຳໄປປູກ
- ສະມາຊິກທຸກຄົນສາມາດນຳໃຊ້ເຕັກນິກໃນການປູກ ແລະ ບົວລະບັດສວນກາເຟໄດ້ຢ່າງຖືກຕ້ອງ
- ກຸ່ມສາມາດແປຮູບເປັນກາເຟໝາກຂາວ ແລະ ໝາກຂຽວໄດ້, ມີຜູ້ຊື້ເປັນປະຈຳ ແລະ ມີສັນຍາການຊື້ຂາຍ
- ຊາວສວນມີລາຍຮັບເພີ່ມຂຶ້ນຈາກການຂາຍກາເຟ ແລະ ມີກອງທຶນຂອງກຸ່ມ
- ກຸ່ມສາມາດຄຸ້ມຄອງ ແລະ ບໍລິຫານກຸ່ມໄດ້ໃນລະດັບດີພໍສົມຄວນ

**ປັດໃຈສູ່ຜົນສຳເລັດ**

- ສ້າງຄວາມສາມະຄີ ແລະ ເປັນເອກະພາບໃນຊຸມຊົນ
- ມີຄວາມໂປ່ງໃສ, ສະມາຊິກທຸກຄົນໃນກຸ່ມສາມາດກວດສອບໄດ້
- ເອົາໃຈໃສ່ປັບປຸງຄຸນນະພາບເລີ່ມແຕ່ຂັ້ນຕອນການກ້າແກ່ນຈົນເຖິງຂັ້ນຕອນການປຸງແຕ່ງ
- ສາມາດແປຮູບເປັນກາເຟຂາວ ແລະ ກາເຟຂຽວ ມີຕະຫລາດຫມັ້ນຄົງເພາະສາມາດສະໜອງກາເຟໄດ້ຕາມຄຸນນະພາບທີ່ຜູ້ຊື້ຕອງການ

**ສິ່ງທ້າທາຍ**

- ບາງປີໝອກຊຸ້ນຕົກຫລາຍເຮັດໃຫ້ຕົ້ນກາເຟຕາຍເກືອບໝົດ
- ມີສັດຕູພືດທຳລາຍເປັນຕົ້ນແມ່ນເພ້ຍ ແລະ ແມງມອດເຈາະແກ່ນກາເຟ
- ກາເຟເຂດແກ່ວແສດເລີ່ມມີຊື່ສຽງ, ຕະຫລາດຕ້ອງການຫລາຍຂຶ້ນ ແຕ່ວ່າແຮງງານຜະລິດໃນແຕ່ລະຄອບຄົວພັດໜ້ອຍ

**ຂໍ້ສະເໜີແນະ**

- ການຜະລິດກາເຟຕ້ອງນຳໃຊ້ເຕັກນິກຊີວະພາບເພື່ອຮັບປະກັນດ້ານຄຸນນະພາບ ແລະ ມີຕະຫລາດຮອງຮັບ
- ຕ້ອງເຮັດເປັນກຸ່ມເພື່ອເປັນການທ້ອນໂຮມຜົນຜະລິດໃຫ້ພຽງພໍກັບປະລິມານຄວາມຕ້ອງການຂອງຜູ້ຊື້ ພ້ອມກັນນັ້ນຕ້ອງມີຄວາມສາມະຄີ ແລະ ມີຄວາມເປັນເອກະພາບພາຍກັນພາຍໃນກຸ່ມ